ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 02 /ຈນວ

ລົງວັນທີ: 24 ມີນາ 2017

# ຄຳສັ່ງ
## ວ່າດ້ວຍການຮັກສາຄວາມເປັນລະບຽບຮຽບຮ້ອຍໃນການຈັດງານບຸນ ສົ່ງທ້າຍປີເກົ່າ ພສ 2559 ແລະ ຕ້ອນຮັບປີໃໝ່ ພສ 2560 ຢູ່ນະຄອນຫຼວງວຽງຈັນ

ເຖິງ: - ທ່ານເຈົ້າເມືອງ 9 ເມືອງ, ທ່ານຫົວໜ້າພະແນກການ-ອົງການທຽບເທົ່າ ອ້ອມຂ້າງ ນວ;
- ທ່ານຫົວໜ້າກອງບັນຊາການ ປກຊ-ປກສ ນະຄອນຫຼວງວຽງຈັນ;
- ທ່ານຫົວໜ້າຫ້ອງການກະຊວງ-ອົງການທຽບເທົ່າ ອ້ອມຂ້າງສູນກາງພັກ, ລັດຖະບານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ນະຄອນຫຼວງວຽງຈັນ;
- ທ່ານຜູ້ອຳນວຍການສະຖາບັນ, ວິສາຫະກິດ, ອົງການຈັດຕັ້ງສັງຄົມ ແລະ ຊາວນະຄອນຫຼວງວຽງຈັນ.

- ອີງຕາມມາດຕາ 19, 20 ໝວດ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

- ອີງຕາມຜົນການຊີ້ນຳ ຂອງກອງປະຊຸມຄະນະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄັ້ງວັນທີ 13 ມີນາ 2017;

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 230/ຫສນຍ.ກລຂ, ລົງວັນທີ 21 ມີນາ 2017.

ເພື່ອເຮັດໃຫ້ການສະເຫຼີມສະຫຼອງບຸນປີໃໝ່ລາວ ພສ 2560 (ປີລະກາ) ທີ່ຈະໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ ດຳເນີນໄປດ້ວຍຄວາມເບີກບານມ່ວນຊື່ນ, ຮັກສາມູນເຊື້ອວັດທະນະທຳ, ປະເພນີອັນດີງາມຂອງຊາດ, ເສີມສ້າງຄວາມສາມັກຄີ, ໄມຕີຈິດມິດຕະພາບຂອງຊາວນະຄອນຫຼວງວຽງຈັນ ກັບແຂກເມືອງ, ຮັບປະກັນຄວາມສະຫງົບສຸກ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ຄວາມສວຍງາມຂອງເມືອງຫຼວງໃຫ້ດີ.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງ ດັ່ງນີ້:

1. ໃຫ້ທົ່ວນະຄອນຫຼວງວຽງຈັນ ຈັດງານສົ່ງທ້າຍປີເກົ່າ ພສ 2559 (ປີວອກ) ແລະ ຕ້ອນຮັບປີໃໝ່ ພສ 2560 (ປີລະກາ) ຢ່າງເປັນເອກະພາບໃນຂອບເຂດທົ່ວນະຄອນຫຼວງວຽງຈັນ ຕາມປະເພນີ ແລະ ນະໂຍບາຍລັດຖະບານ ເປັນໄລຍະເວລາ 05 ມື້, ແຕ່ວັນທີ 14-16 ເມສາ 2017 (ວັນພັກທົດແທນ ແມ່ນວັນທີ 13, 17 ເມສາ 2017).

2. ການສະເຫຼີມສະຫຼອງປີໃໝ່ລາວ ແມ່ນໃຫ້ສົ່ງເສີມກິດຈະກຳ ທີ່ເປັນປະເພນີອັນດີງາມ ຄື: ການພົບປະສ້າງສັນ ແລະ ບາສີສູ່ຂວັນພາຍໃນຄອບຄົວ ຫຼື ການຈັດຕັ້ງ, ການຫົດນ້ຳອວຍໄຊໃຫ້ພອນຜູ້ອາວຸໂສ ແລະ ຊຶ່ງກັນ ແລະ ກັນ, ການເຂົ້າວັດຫົດສົງພະພຸດທະຮູບ, ຕົບພະທາດຊາຍ ແລະ ກິດຈະກຳປິ່ນອ້ອມອື່ນໆທີ່ເຫັນວ່າມີຄວາມຈຳເປັນ, ມີຜົນປະໂຫຍດ ແລະ ມີຄວາມສາມາດຄວບຄຸມຂອງພາກສ່ວນຕົນ.

3. ໃຫ້ທຸກພາກສ່ວນ ແລະ ທຸກເພດໄວ ສົ່ງເສີມ, ເຜີຍແຜ່ ວັດທະນະທຳ ແລະ ມາລະຍາດທີ່ດີງາມຂອງຊາດລາວ ໃນການຈັດກິດຈະກຳ ແລະ ການປະພຶດຕ່າງໆ ໂດຍສ່ອງແສງໃຫ້ເຫັນເຖິງຄວາມຮັກ, ຄວາມກະຕັນຍູຮູ້ບຸນຄຸນຜູ້ອາວຸໂສ, ຄວາມສຸພາບອ່ອນໂຍນ, ຄວາມມີສະເໜ່, ສະອາດບໍລິສຸດພຸດຜ່ອງ ແລະ ສີວິໄລ; ຢັບຢັ້ງສິ່ງອັບປະມຸງຄຸນບໍ່ໃຫ້ເກີດຂຶ້ນ ເຊັ່ນ: ອັກຄີໄພ, ສຽງແຕກ, ຕີວະຍິວະ, ອາລະວາດຕີກັນ, ມຶນເມົາ ແລະ ອຸບັດຕິເຫດໃນຕະຫຼອດງານ; ສຳລັບ ເວລາຫົດສົງນ້ຳແບບມວນຊົນ ໃຊ້ເວລາ 3 ວັນຄື: ວັນທີ 14,15,16 ເມສາ 2017 ເລີ່ມແຕ່ເວລາ 09:00 ໂມງ ເຖິງ 18:00 ໂມງ.

4. ສະຖານທີ່ຈັດງານສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ໃຫ້ຈັດຢູ່ຕາມເຮືອນ, ສະໂມສອນຂອງບ້ານ, ສຳນັກງານ, ໂຮງງານ, ວັດວາອາຣາມ, ແຫຼ່ງທ່ອງທ່ຽວ, ສວນວັດທະນະທຳ, ຫາດຊາຍ ຕາມແມ່ນ້ຳງື່ມ ແລະ ນ້ຳຂອງທີ່ມີເງື່ອນໄຂຄົບຖ້ວນ, ສຳລັບສະຖານທີ່ ທີ່ອົງການປົກຄອງນະຄອນຫຼວງວຽງຈັນຮັບຜິດຊອບ ແມ່ນໃຫ້ຈັດໃສ່ຄຸ້ມຕົວເມືອງເກົ່າ, ຕາມຖະໜົນເສດຖາທິລາດ ຫາ ເຈົ້າຟ້າງຸ່ມ ແລະ ບໍລິເວນຫາດດອນຈັນ.

5. ໃຫ້ທຸກຄົນປະຕິບັດ 4 ຂໍ້ຫ້າມໃນການຫຼິ້ນບຸນປີໃໝ່ ດັ່ງນີ້:

5.1. ຫ້າມບໍ່ໃຫ້ຜູ້ດື່ມທາດເຫຼົ້າ ແລະ ເສບສິ່ງມຶນເມົາຂັບລົດ, ຜູ້ຂັບລົດ ບໍ່ໃຫ້ດື່ມເຫຼົ້າ ແລະ ເສບສິ່ງມຶນເມົາ.

5.2. ຫ້າມໃຊ້ຂອງແຂງ, ສິ່ງເປິະເປື້ອນ ແລະ ລາມົກອະນາຈານໃນງານ: ນ້ຳສີ, ນ້ຳເປື້ອນ, ນ້ຳຄັນ, ແກວ່ງຖົງນ້ຳ, ແກວ່ງນ້ຳກ້ອນໃສ່ກັນ, ນຸ່ງເຄື່ອງໂປ້, ເປືອຍ ເຂົ້າວັດ ແລະ ສະຖານທີ່ຊຸມຊົນ.

5.3. ຫ້າມຕັນທາງການສັນຈອນຕາມເສັ້ນທາງຫຼວງ, ເສັ້ນທາງນະຄອນຫຼວງວຽງຈັນ ແລະ ເສັ້ນທາງເມືອງ.

5.4. ຫ້າມໃຊ້ສຽງດັງ, ສຽງແຕກໃນງານບຸນ: ໝາກກະໂພກ, ເປີດສຽງດົນຕີເປືອງນັບລົບກວນຜູ້ອື່ນ.

6. ມາດຕະການຈັດຕັ້ງປະຕິບັດ:

6.1. ໃຫ້ທ່ານເຈົ້າເມືອງ, ຫົວໜ້າພະແນກການ-ອົງການທຽບເທົ່າ ແລະ ທ່ານຫົວໜ້າຫ້ອງການກະຊວງ-ອົງການທຽບເທົ່າຂອງສູນກາງ ອຳນວຍຄວບຄຸມການຈັດຕັ້ງປະຕິບັດ ແລະ ເຜີຍແຜ່ຄຳສັ່ງນີ້ໃຫ້ພະນັກງານ, ທະຫານ, ຕຳຫຼວດກຳມະກອນ, ນັກຮຽນ, ນັກສຶກສາ ຕະຫຼອດຮອດພໍ່ແມ່ປະຊາຊົນ ຊາວນະຄອນຫຼວງວຽງຈັນທຸກຊັ້ນຄົນ ແລະ ແຂກ ເມືອງ ຈົ່ງຮັບຮູ້ ແລະ ຮ່ວມມືປະຕິບັດເປັນຢ່າງດີ.

6.2. ໃຫ້ຈັດຕັ້ງຄະນະຮັບຜິດຊອບ, ມີຜູ້ປະຈຳການ ຢູ່ສຳນັກງານຂອງຕົນຢ່າງເປັນທາງການ ແລະ ເພີ່ມທະວີລະບອບປະສານງານ ແກ້ໄຂບັນຫາຕ່າງໆໄດ້ຢ່າງທັນການ ໃນການອຳນວຍຄວບຄຸມການຈັດງານປີໃໝ່ ໃນຂອບເຂດຂອງຕົນ.

6.3. ມອບໃຫ້ທ່ານເຈົ້າເມືອງ ແນະນຳນາຍບ້ານ ແລະ ພະນັກງານກໍ່ສ້າງຮາກຖານປະຈຳບ້ານສ້າງສັນຍາວຽກປ້ອງກັນຄວາມສະຫງົບປອດໄພ ກັບຫົວໜ້າຄອບຄົວ ເປັນຕົ້ນສັນຍາປະຕິບັດ 4 ຂໍ້ຫ້າມຕາມຄຳສັ່ງສະບັບນີ້.

6.4. ມອບໃຫ້ທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນ ຜູ້ຮັບຜິດຊອບວຽກວັດທະນະທຳ ແລະ ສັງຄົມ ເປັນຜູ້ຊີ້ນຳການອຳນວຍຄວບຄຸມການຈັດຕັ້ງງານປີໃໝ່ ແລະ ທ່ານເຈົ້າເມືອງ, ຫົວໜ້າພະແນກການ-ອົງການທຽບເທົ່າ, ກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບນະຄອນຫຼວງວຽງຈັນ ເປັນຜູ້ບັນຊາ, ຜູ້ອຳນວຍຄວບຄຸມວຽກງານຕົວຈິງ, ຮັບຜິດຊອບຕໍ່ຜົນໄດ້ ແລະ ຜົນເສຍຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

7. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ສີຫູນ ສິດທິລີໄຊ

<u>ປ່ອນສົ່ງ:</u>

- ເຈົ້າຄອງ-ຮອງເຈົ້າຄອງ ນວ 03 ສະບັບ;
- ບັນດາເມືອງ 09 ສະບັບ;
- ບັນດາພະແນກການ-ຫ້ອງການ ປ່ອນລະ 01 ສະບັບ;
- ບັນດາກະຊວງ, ອົງການຂອງສູນກາງ ປ່ອນລະ 01 ສະບັບ;
- ເກັບມ້ຽນສຳເນົາ 02 ສະບັບ.